# MEDICAL TRAVEL in TAIWAN



## ຂັ້ນຕອນ

- ກໍານົດຄວາມຕ້ອງການຂອງທ່ານ
- ຕິດຕໍ່ຫາໂຮງໝໍໃນໄຕ້ຫວັນ
- ປະເມີນໂຮງໝໍ
- ສະໝັກຂໍວິຊາທາງການແພດໂດຍໂຮງໝໍໄຕ້ຫວັນ
- ເດີນທາງໄປໄຕ້ຫວັນສໍາລັບການປິ່ນປົວ
- ອອກໂຮງໝໍ ⁞ ຕິດຕາມຜົນຫຼັງການຜ່າຕັດ

## ສັງລວມກ່ຽວກັບການບໍລິການທາງການແພດໃນໄຕ້ຫວັນ

ການບໍລິການທາງການແພດຄຸນນະພາບສູງຂອງໄຕ້ຫວັນ ແລະ ໂຄງການປະກັນສຸຂະພາບແຫ່ງຊາດໄດ້ຮັບການຍອມຮັບໃນທົ່ວໂລກຈາກສື່ຕ່າງໆທົ່ວໂລກ ລວມທັງ National Geographic Channel, the New York Times, TIME ແລະ CNN. ໃນປີ 2014, The Richest ໄດ້ຈັດອັນດັບໄຕ້ຫວັນເປັນປະເທດທີ່ໃຫ້ບໍລິການທາງການແພດສູງສຸດ ເຊິ່ງບອກເຖິງຄວາມເປັນເລີດ ແລະ ຄວາມສາມາດທີ່ດີຢ່ຽມຂອງການບໍລິການທາງການແພດຂອງໄຕ້ຫວັນ.

---

ໜ່ວຍສະເພາະກິດທາງການແພດໄຕ້ຫວັນ,
ກະຊວງສຸຂະພາບ ແລະ ສະຫວັດດີການ

ເວັບໄຊການທ່ອງທ່ຽວທາງການແພດ
www.medicaltravel.org.tw

ໂທ +886-2-2885-1528

ໂຄສະນາໂດຍ | MOHW

## ເປັນຕ້ອງໄຕ້ຫວັນ?

- ຄຸນນະພາບສູງ
- ລາຄາສົມເຫດສົມຜົນ (ສາມາດຈ່າຍໄດ້)
- ເຕັກໂນໂລຊີທີ່ກ້າວໜ້າ
- ການບໍລິການທີ່ຄົບຖ້ວນສົມບູນ
- ການບໍລິການຄົບວົງຈອນຈາກຜູ້ຊ່ຽວຊານ
- ທີມງານທີ່ເປັນມືອາຊີບ ແລະ ມີປະສົບການ
- ປາຍທາງທ່ອງທ່ຽວທີ່ດີເລີດ

## ການຜ່າຕັດຕົກແຕ່ງຂໍ້

ທ່ານໝໍຜ່າຕັດຢູ່ໄຕ້ຫວັນມີປະສົບການສູງໃນການຜ່າຕັດຕົກແຕ່ງ ແລະ ປ່ຽນຖ່າຍຂໍ້ ໂດຍເຮັດການຜ່າຕັດຕົບແຕ່ງຂໍ້ປະມານ 47,000 ກໍລະນີຕໍ່ປີ. ຄົນເຈັບໄດ້ຮັບຜົນປະໂຫຍດຈາກການຜ່າຕັດຜ່ານກ້ອງ ເຊິ່ງມີບາດແຜນ້ອຍກວ່າ ແລະ ຟື້ນຕົວໄດ້ໄວກວ່າ. ນອກນັ້ນ, ຄວາມກ້າວໜ້າຂອງໄຕ້ຫວັນໃນທາງຊີວະການແພດນຳໄປສູ່ການພັດທະນາຜະລິດຕະພັນຕ່າງໆທີ່ເໝາະສົມສຳລັບຊາວອາຊີ. ໄຕ້ຫວັນໄດ້ຮັບການຍອມຮັບໃນທົ່ວໂລກສຳລັບເຕັກໂນໂລຊີທາງການແພດທີ່ລາຄາບໍ່ແພງ ແລະ ຄຸ້ມຄ່າຂອງມັນ.

## ການປູກຖ່າຍຕັບ

ໃນຕະຫຼອດ 30 ປີຜ່ານມາ, ໄຕ້ຫວັນໄດ້ພະຍາຍາມບັນລຸໄດ້ຄວາມສຳເລັດທີ່ກ້າວກະໂດດໃນການແພດປູກຖ່າຍ, ໂດຍສະເພາະການປູກຖ່າຍຕັບ. ຜົນໄດ້ຮັບ – ອັດຕາການລອດຕາຍຫຼັງປູກຖ່າຍຕັບໜຶ່ງປີ 86% ແລະ ອັດຕາລອດຕາຫ້າປີ 74%, ແມ່ນດີກວ່າຜົນການປູກຖ່າຍຂອງສະຫະລັດ, ເອີຣົບ ແລະ ຍີ່ປຸ່ນ. ທ່ານໝໍຜ່າຕັດໄຕ້ຫວັນໄດ້ສ້າງສະຖິຕິລະດັບອາຊີ ແລະ ລະດັບໂລກໄວ້ຢ່າງຫຼວງຫຼາຍໃນຂົງເຂດນີ້.

## ການຄຸ້ມຄອງຫົວໃຈ ແລະ ຫຼອດເລືອດ

ການປູກຖ່າຍຫົວໃຈສຳເລັດຄັ້ງທຳອິດໃນອາຊີຖືກເຮັດຢູ່ໄຕ້ຫວັນ. ການສວນຫົວໃຈ ແລະ ຫຼອດເລືອດ ແລະ ການຮັກສາພາວະຫົວໃຈເຕັ້ນໄວຜິດປົກກະຕິ ບັນລຸໄດ້ອັດຕາຄວາມສຳເລັດ 99% ໂດຍມີອາການແຊກຊ້ອນໜ້ອຍກວ່າ 1%. ລະດັບຄ່າໃຊ້ຈ່າຍແມ່ນຖືກກວ່າເມື່ອທຽບກັບສິງກະໂປ ແລະ ຮ່ອງກົງ.

## ລະບົບຜ່າຕັດ Da Vinci

ລະບົບຜ່າຕັດຂັ້ນສູງ da Vinci ໄດ້ຖືກນຳໃຊ້ຢ່າງກວ້າງຂວາງໃນການຜ່າຕັດທາງເດີນປັດສະວະ, ນາລີແພດວິທະຍາ, ການຜ່າຕັດທົ່ວໄປ, ການຜ່າຕັດລຳໄສ້ໃຫຍ່ ແລະ ທະວານໜັກ, ການຜ່າຕັດຫົວໃຈ, ການຜ່າຕັດຊວງອົກ ແລະ ການຜ່າຕັດສ່ວນ, ລຳຄໍ ແລະ ຫູດັງຄໍ. ມີລະບົບ da Vinci ປະມານ 30 ຈາກທັງໝົດຫຼາຍກວ່າ 3,600 ລະບົບໄດ້ຖືກນຳໃຊ້ໃນໄຕ້ຫວັນ ເຊິ່ງເປັນອັດຕາສູງສຸດໃນທຸກປະເທດອາຊີ

## ການແພດຈະເລີນພັນ

ເຕັກໂນໂລຊີຊ່ວຍການຈະເລີນພັນ (ART) ໃນໄຕ້ຫວັນໄດ້ປະສົບຜົນສຳເລັດຢ່າງສູງ. ເຕັກນິກທີ່ມີຄຸນນະພາບສູງໄດ້ເຮັດໃຫ້ອັດຕາການຝັງຕົວອ່ອນສຳເລັດເຖິງ 36.7% ແລະ ອັດຕາການເກີດລູກ 35.8%, ເຊິ່ງທຽບເທົ່າກັບອັດຕາຜົນສຳເລັດຂອງສະຫະລັດ ແລະ ສູງກວ່າອັດຕາຂອງການາດາ, ສະຫະລາດຊະອານາຈັກ, ເກົາຫຼີໃຕ້ ແລະ ຍີ່ປຸ່ນ. ການເຂົ້າເຖິງເຕັກໂນໂລຊີ ແລະ ຢາໃໝ່ໆຍັງທຽບເທົ່າກັບເອີຣົບ ແລະ ສະຫະລັດເຊັ່ນກັນ. ນອກນັ້ນ, ART ຍັງລາຄາບໍ່ແພງໃນໄຕ້ຫວັນ - ປະມານ 50% ຂອງລາຄາສະເລ່ຍທົ່ວໂລກ ເຊິ່ງເຮັດໃຫ້ໄຕ້ຫວັນມີຄວາມສາມາດແຂ່ງຂັນໄດ້ສູງໃນຕະຫຼາດໂລກ.

## ການປິ່ນປົວມະເຮັງ

ໄຕ້ຫວັນບັນລຸໄດ້ຜົນໄດ້ຮັບເປັນເລີດໃນການປິ່ນປົວມະເຮັງເປັນເວລາ 30 ປີຜ່ານມາ. ນີ້ສະແດງອອກໂດຍອັດຕາລອດຕາຍຫ້າປີສູງເຖິງ 73% (ທຽບກັບ 67% ໃນເອີຣົບ ແລະ ສະຫະລັດ). ຄວາມເປັນເລີດທີ່ຫາອັນປຽບບໍ່ໄດ້ນີ້ລວມມີອັດຕາລອດຕາຍ 91% ສຳລັບມະເຮັງເຕົ້ານົມ, 32% ສຳລັບມະເຮັງປອດ, 68% ສຳລັບມະເຮັງລຳໄສ້ໃຫຍ່ ແລະ 99% ສຳລັບມະເຮັງຕ່ອມໄທຮອຍ. ດ້ວຍຍຸດທະສາດປິ່ນປົວມະເຮັງທີ່ແນ່ນອນ ແລະ ການນຳໃຊ້ຂໍ້ແນະນຳວິທີປະຕິບັດທາງຄລີນິກ NCCN, ໄຕ້ຫວັນໃຫ້ການບໍລິການທາງການແພດທີ່ກ້າວໜ້າທີ່ສຸດ ແລະ ເປັນແບບສ່ວນຕົວສຳລັບການປິ່ນປົວມະເຮັງ.

# ຄວາມຊ່ຽວຊານ..

ເວັບໄຊການທ່ອງທ່ຽວທາງການແພດ
www.medicaltravel.org.tw

ໂທ +886-2-2885-1528

## ການແກ້ໄຂຄວາມພິການເທິງໃບໜ້າ

ໄຕ້ຫວັນມີສູນແກ້ໄຂຄວາມພິການເທິງໃບໜ້າທຳອິດໃນອາຊີຕາເວັນອອກສ່ຽງໃຕ້. ໂດຍມີຜູ້ຊ່ຽວຊານມືອາຊີບ ແລະ ທີມການແພດທີ່ຄົບຖ້ວນ, ສູນແກ້ໄຂຄວາມພິການເທິງໃບໜ້າຂອງໄຕ້ຫວັນບັນລຸໄດ້ອັດຕາຄວາມສຳເລັດ 100% ໃນການຜ່າຕັດສ້ອມແປງປາກແຫວ່ງເພດານໂຫວ່.